ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 396/ນຍ

ນະຄອນຫລວງວຽງຈັນ, ວັນທີ ໒ ພະຈິກ 2011

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ລັດຖະດຳລັດສະບັບເລກທີ 107/ປປທ, ລົງວັນທີ 30 ມິຖຸນາ 2011 ກ່ຽວກັບໂຄງປະກອບກົງຈັກ, ການແຕ່ງຕັ້ງນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ ແລະ ຄະນະລັດຖະບານ ແຫ່ງ ສປປ ລາວ;
- ອີງຕາມ ການສະເໜີ ຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 81/ຖວທ, ລົງວັນທີ 23 ສິງຫາ 2011 ແລະ ສະບັບເລກທີ155/ຖວທ.ຈຕ, ລົງວັນທີ 21 ກັນຍາ 2011;
- ອີງຕາມ ການສະເໜີຂອງກະຊວງພາຍໃນ ສະບັບເລກທີ 111 /ພນ, ລົງວັນທີ 24 ຕຸລາ 2011.

## ນາຍົກລັດຖະມົນຕີ ອອກດຳລັດ

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ໄດ້ຮັບການພັດທະນາຕາມແນວທາງນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ,

ປະກອບສ່ວນເຮັດໃຫ້ເສດຖະກິດ-ສັງຄົມແຫ່ງຊາດ ເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ, ຮອບດ້ານ ແລະ ໝັ້ນຄົງ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຊື່ຫຍໍ້ເປັນຕົວອັກສອນຫຍໍ້ວ່າ: ຖວທ ແລະ ຂຽນເປັນພາສາຝຣັ່ງ ວ່າ: Ministère de l 'Information, de la Culture et du Tourisme ຂຽນເປັນຕົວອັກສອນຫຍໍ້ MICT. ແມ່ນອົງການຈັດຕັ້ງຄຸ້ມຄອງລັດຂັ້ນສູນກາງ ສັງກັດໃນໂຄງປະກອບກົງຈັກຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງ ແລະ ພັດທະນາວຽກງານດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີໜ້າທີ່ ດັ່ງນີ້:

3.1 ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງສະພາແຫ່ງຊາດ, ລັດຖະບັນຍັດ, ລັດຖະດຳລັດ ຂອງປະທານປະເທດ ແລະ ນິຕິກຳຕ່າງໆ ຂອງນາຍົກລັດຖະມົນຕີ ວາງອອກ;

3.2 ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ, ທິດທາງແຜນການ, ຄຳສັ່ງຂອງລັດຖະບານ ມາເປັນແຜນການ, ໂຄງການລະອຽດໃນແຕ່ລະໄລຍະ ກ່ຽວກັບການພັດທະນາວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍ;

3.3 ຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ ແລະແຜນການພັດທະນາດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ;

3.4 ຄົ້ນຄວ້າສ້າງຮ່າງ ແລະປັບປຸງກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳລັດ, ມະຕິ, ຄຳສັ່ງ, ແຈ້ງການ ເພື່ອຄຸ້ມຄອງມະຫາພາກດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເພື່ອສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ພິຈາລະນາ;

3.5 ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດກົດໝາຍ, ແຜນການ, ແຜນງານ ແລະ ໂຄງການທີ່ຂຶ້ນກັບກະຊວງ; ສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະຂໍ້ມູນຂ່າວສານ ຢູ່ໃນຂອບເຂດການຄຸ້ມຄອງຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3.6 ຄົ້ນຄວ້າ, ນຳສະເໜີລັດຖະບານ ພິຈາລະນາອະນຸມັດສ້າງຕັ້ງສຳນັກງານຜູ້ຕາງໜ້າກ່ຽວກັບວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢູ່ຕ່າງປະເທດ;

3.7 ຄຸ້ມຄອງການເຄື່ອນໄຫວຂອງບັນດາສະພາ, ສະມາຄົມວິຊາຊີບ ແລະ ນິຕິບຸກຄົນ ທີ່ດຳເນີນທຸລະກິດ ຫລື ທຸລະກຳດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ວາງອອກ;

3.8 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາ, ພິຈາລະນາແກ້ໄຂຄຳຮ້ອງຟ້ອງ-ຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕໍ່ການຈັດຕັ້ງ ແລະ ບຸກຄົນ ທີ່ລະເມີດລະບຽບກົດໝາຍໃນຂົງເຂດວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

3.9 ພົວພັນ, ຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມລະບຽບກົດໝາຍ;

3.10ຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງ, ກຳນົດມາດຕະຖານຕຳແໜ່ງງານໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນແຕ່ລະໄລຍະ. ຄຸ້ມຄອງ, ສຶກສາອົບຮົມ, ບຳລຸງ-ກໍ່ສ້າງ, ນຳໃຊ້ພະນັກງານ, ນັກວິຊາການ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນຂອງຕົນ ຕາມລະບຽບກົດໝາຍກຳນົດ;

3.11ສ້າງ, ປັບປຸງ ແລະ ຍົກລະດັບໂຄງການຫລັກສູດການຮຽນ-ການສອນວິຊາການສື່ມວນຊົນ, ສິລະປະ, ວັດທະນະທຳ ແລະ ການທ່ອງທ່ຽວ ເພື່ອກໍ່ສ້າງບຳລຸງບຸກຄະລາກອນ ສະໜອງໃຫ້ຂະແໜງການ ແລະ ສັງຄົມ;

3.12ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ ທີ່ຂຶ້ນກັບຂະແໜງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ຖືກເປົ້າໝາຍ ແລະ ມີປະສິດທິຜົນສູງ;

3.13ຄຸ້ມຄອງ, ນຳໃຊ້ກອງທຶນທ່ອງທ່ຽວ ແລະ ກອງທຶນສົ່ງເສີມວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ທອງທ່ຽວ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

3.14ຂຶ້ນແຜນສ້າງລາຍຮັບ ແລະ ມອບຄ່າບໍລິການວິຊາການເຂົ້າງົບປະມານແຫ່ງຊາດຕາມລະບຽບກົດໝາຍ.

## ກ. ດ້ານຖະແຫລງຂ່າວ.

1. ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ທິດທາງແຜນການພັດທະນາເສດຖະກິດ-ສັງຄົມ, ບັນດາກົດໝາຍຂອງລັດ, ບັນດາຂໍ້ກຳນົດ ກ່ຽວກັບວຽກງານຖະແຫລງຂ່າວ ມາເປັນແຜນການ, ແຜນງານ, ໂຄງການລະອຽດພ້ອມທັງຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;
2. ເປັນກະບອກສຽງຂອງສູນກາງພັກ ແລະ ລັດຖະບານ ໃນການເຜີຍແຜ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ລະບຽບກົດໝາຍຂອງລັດ ຕໍ່ພາຍໃນ ແລະ ຕ່າງປະເທດ, ພ້ອມທັງສ່ອງແສງສະພາບຕົວຈິງໃນພາລະກິດການປົກປັກຮັກສາປະເທດຊາດ ແລະການພັດທະນາເສດຖະກິດ-ສັງຄົມໃນທົ່ວປະເທດ ຕະຫລອດເຖິງຄວາມມຸ່ງມາດປາຖະໜາອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າອີກດ້ວຍ;
3. ສ້າງແຜນກຳນົດການພັດທະນາຖະແຫລງຂ່າວ, ກຳນົດມາດຕະຖານ, ເງື່ອນໄຂການສ້າງຕັ້ງ ຫລື ຍົກເລີກຫົວໜ່ວຍການຈັດຕັ້ງ ທີ່ເຮັດວຽກງານຖະແຫລງຂ່າວ, ຂ່າວສານ. ການອອກໃບອະນຸຍາດ, ຖອນໃບອະນຸຍາດບັດນັກຂ່າວ ແລະ ການເຄື່ອນໄຫວຂອງສື່ມວນຊົນ ພ້ອມ

ອະນຸຍາດການນຳເຂົ້າ-ສົ່ງອອກສິ່ງພິມ ແລະ ສື່ເອເລັກໂຕຣນິກ ເຂົ້າມາເຜີຍແຜ່ ແລະ ຈຳໜ່າຍຢູ່ ສປປ ລາວ;

4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຄຸ້ມຄອງການເຄື່ອນໄຫວຂອງນັກຂ່າວ, ສື່ມວນຊົນລາວ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ພາຍໃນ ສປປ ລາວ ພ້ອມທັງນັກຂ່າວລາວທີ່ໄປເຄື່ອນໄຫວຢູ່ຕ່າງປະເທດ;
5. ຕິດຕາມກວດກາ ແລະ ປະເມີນຜົນການໂຄສະນາຖະແຫລງຂ່າວ ຂອງສື່ມວນຊົນໃນແຕ່ລະໄລຍະ; ສັງລວມວິໄຈຂ່າວຂອງສື່ມວນຊົນຕ່າງປະເທດ ທີ່ອອກຂ່າວກ່ຽວກັບລາວເພື່ອສະໜອງຂໍ້ມູນໃຫ້ແກ່ລັດຖະບານຢ່າງທັນເວລາ;
6. ຄົ້ນຄວ້າ, ກຳນົດມາດຕະຖານເຕັກນິກ, ເຕັກໂນໂລຊີ ທີ່ກ້າວໜ້າທັນສະໄໝ ເຂົ້າໃນວຽກງານສື່ມວນຊົນຢ່າງເປັນເອກະພາບ ແລະ ເໝາະສົມກັບສະພາບຕົວຈິງຂອງປະເທດຊາດ ແລະ ຍຸກສະໄໝ;
7. ເກັບກຳ, ສຳເນົາ, ຄຸ້ມຄອງບັນດາສິ່ງພິມ, ສື່ເອເລັກໂຕຣນິກໃຫ້ເປັນລະບົບຄົບຊຸດ; ຄຸ້ມຄອງການນຳໃຊ້ພາຫະນະສື່ມວນຊົນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ມີປະສິດທິຜົນ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຕົນ;
8. ຈັດຕັ້ງປຸກລະດົມທົ່ວສັງຄົມ ເຂົ້າຮ່ວມຂະບວນການແຂ່ງຂັນປະດິດສ້າງ ແລະ ພັດທະນາວຽກງານສື່ມວນຊົນໃຫ້ກວ້າງຂວາງຕໍ່ເນື່ອງ.

ຂ. ດ້ານວັດທະນະທຳ.

1. ຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ຂອງສູນກາງພັກ ກ່ຽວກັບວຽກງານວັດທະນະທຳຂອງຊາດ ເພື່ອຫັນເປັນແຜນການ, ແຜນງານ, ໂຄງການລະອຽດ ໃນການປົກປັກຮັກສາ, ຟື້ນຟູບູລະນະ, ພັດທະນາ, ນຳໃຊ້ຄຸນຄ່າ ແລະ ໂຄສະນາເຜີຍແຜ່ມໍລະດົກທາງດ້ານວັດທະນະທຳ ທີ່ເປັນຮູບປະທຳ ແລະ ນາມມະທຳຕໍ່ພາຍໃນ ແລະ ຕ່າງປະເທດດ້ວຍຮູບການຕ່າງໆ;
2. ປົກປັກຮັກສາ, ຟື້ນຟູບູລະນະ, ພັດທະນາ ແລະ ນຳໃຊ້ຄຸນຄ່າຂອງວັດທະນະທຳແຫ່ງຊາດຢ່າງສົມເຫດສົມຜົນ ແລະ ເຜີຍແຜ່ວັດທະນະທຳຂອງຊາດ ຕໍ່ພາຍໃນ ແລະ ຕ່າງປະເທດ
3. ຊຸກຍູ້ຄຸ້ມຄອງການປະດິດຄິດແຕ່ງ ເພງຮ້ອງ, ຂັບ, ລຳ, ບົດຟ້ອນ, ດົນຕີ, ລະຄອນ ແລະ ກາບກອນ ເພື່ອສົ່ງເສີມໃຫ້ມະຫາຊົນເຂົ້າຮ່ວມ ຢ່າງກວ້າງຂວາງ;
4. ຊຸກຍູ້, ປຸກລະດົມ, ຄຸ້ມຄອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມການສະແດງສິລະປະ, ງານມະໂຫລານສິລະປະລະດັບທ້ອງຖິ່ນ, ລະດັບຊາດ, ລະດັບສາກົນ ເພື່ອຮັບໃຊ້ໜ້າທີ່ການເມືອງ ແລະ ສ້າງບັນຍາກາດ ຕ້ອນຮັບວັນສຳຄັນຕ່າງໆຂອງພັກ, ຂອງຊາດ, ຂອງສາກົນ ຢູ່ພາຍໃນ ແລະ ຕ່າງປະເທດ;
5. ກວດກາ, ອະນຸມັດສ້າງຕັ້ງ, ສັ່ງໂຈະ, ຍົກເລີກໜ່ວຍງານຈັດຕັ້ງສິລະປິນ ແລະ ເນື້ອໃນ, ລາຍການສະແດງ ຂອງໜ່ວຍງານຈັດຕັ້ງສິລະປິນ ທີ່ເຄື່ອນໄຫວປະກອບອາຊີບສິລະປິນ

ເປັນຕົ້ນ: ເພງຮ້ອງ, ຂັບ, ລຳ, ບົດຟ້ອນ, ດົນຕີ, ລະຄອນ ແລະ ອື່ນໆ ໃນຂອບເຂດທົ່ວປະເທດ;

6. ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສິລະປິນຂອງລາວ, ຂອງຕ່າງປະເທດ ທີ່ເຄື່ອນໄຫວຢູ່ພາຍໃນ ສປປ ລາວ ແລະ ສິລະປິນຂອງລາວໄປເຄື່ອນໄຫວຢູ່ຕ່າງປະເທດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;
7. ຄຸ້ມຄອງ, ອະນຸຍາດ ຫລື ຍົກເລີກການຜະລິດ, ການຈຳໜ່າຍ ແລະ ການນຳເຂົ້າ-ສົ່ງອອກກ່ຽວກັບຜະລິດຕະພັນສິລະປະ ເຊັ່ນ: ກະແຊັດ, ແຜ່ນສຽງ, ຮູບພາບ... ຢ່າງມີການເລືອກເຟັ້ນ ແລະ ມີການແບ່ງຂັ້ນຄຸ້ມຄອງ ຢ່າງຈະແຈ້ງ;
8. ຄົ້ນຄວ້າ ກຳນົດມາດຕະຖານ ກ່ຽວກັບວຽກງານວັດທະນະທຳມະຫາຊົນ ເຊັ່ນ: ການສ້າງຄອບຄົວວັດທະນະທຳ, ກົມກອງ, ສຳນັກງານ, ອົງການວັດທະນະທຳ, ການເຄື່ອນໄຫວສະໂມສອນວັດທະນະທຳ, ສູນວັດທະນະທຳເດັກ, ສະຖານທີ່ບັນເທີງ, ສວນສາທາລະນະພ້ອມທັງຊີ້ນຳການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ. ໂຄສະນາເຜີຍແຜ່ປຸກລະດົມຂະບວນການສ້າງແບບແຜນດຳລົງຊີວິດວັດທະນະທຳ, ຮີດຄອງປະເພນີ, ການເຮັດບຸນສິນກິນທານ ແລະ ງານພິທີກຳທາງດ້ານວັດທະນະທຳຂອງເຜົ່າຕ່າງໆ ແລະ ຂອງຊາດ;
9. ຕິດຕາມ, ກວດກາ ແລະ ຈຳກັດການເຄື່ອນໄຫວທາງດ້ານວັດທະນະທຳທີ່ຜິດ ແລະ ຂັດກັບແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດລາວ;
10. ສຳຫລວດ, ຂຶ້ນທະບຽນວັດຖຸບູຮານ, ບູຮານສະຖານ, ຮ່ອງຮອຍປະຫວັດສາດ, ປູສະນີຍະສະຖານ, ສະຖານທີ່ປະຫວັດສາດ, ທຳມະຊາດ, ວັດທະນະທຳ ເພື່ອວິໄຈ, ອະນຸລັກຮັກສາ, ປະຕິສັງຂອນມໍລະດົກທີ່ເປັນຮູບປະທຳ ແລະ ນາມມະທຳຂອງຊາດ, ຂອງທ້ອງຖິ່ນ ແລະ ເພື່ອນຳສະເໜີຕໍ່ອົງການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ຂອງອົງການສະຫະປະຊາຊາດ(ອຸຍແນັດສະໂກ) ພິຈາລະນາຮັບຮອງເອົາມໍລະດົກວັດທະນະທຳ ທີ່ພົ້ນເດັ່ນຂອງລາວ ເຂົ້າເປັນມໍລະດົກໂລກ;
11. ກຳນົດມາດຕະຖານ, ລະບຽບການ ແລະອະນຸມັດການຂຸດຄົ້ນມໍລະດົກວັດທະນະທຳ ທີ່ເປັນຮູບປະທຳ ແລະ ນາມມະທຳ, ນຳເຂົ້າ-ສົ່ງອອກວັດຖຸບູຮານ ໃຫ້ຖືກຕ້ອງຕາມກົດໝາຍ;
12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ, ເກັບກຳ, ກອບກູ້ ແລະ ປະກອບຄຳເຫັນທາງດ້ານວິຊາການ ຕໍ່ການບຳລຸງຮັກສາບູລະນະ, ປະຕິສັງຂອນ, ການປຸກສ້າງ ແລະ ກິດຈະກຳຕ່າງໆ ທີ່ມີຜົນກະທົບຕໍ່ມໍລະດົກຂອງທ້ອງຖິ່ນ ແລະ ຂອງຊາດ;
13. ແນະນຳ ແລະ ສ້າງຈິດສຳນຶກໃນທົ່ວສັງຄົມ ໃຫ້ເຂົ້າໃຈໃນການຄຸ້ມຄອງ, ນຳໃຊ້ທ່າແຮງ, ການອະນຸລັກຮັກສາ ແລະ ສົ່ງເສີມຄຸນຄ່າມໍລະດົກຂອງຊາດ;
14. ກຳນົດມາດຕະຖານ, ລະບຽບການໃນການສ້າງຕັ້ງ, ການຄຸ້ມຄອງ, ການບໍລິການ ຂອງຫໍພິພິທະພັນ, ຫໍມູນເຊື້ອ, ຫໍວາງສະແດງລະດັບຊາດ, ລະດັບຂະແໜງການ ແລະ ລະດັບທ້ອງຖິ່ນ;

15. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານດ້ານການພິມ, ພິມຈຳໜ່າຍ, ຈຳໜ່າຍສິ່ງພິມ, ການປະດິດຄິດແຕ່ງວັນນະຄະດີ, ວັນນະກຳ;
16. ສົ່ງເສີມ, ຄຸ້ມຄອງນັກປະດິດຄິດແຕ່ງບົດວັນນະຄະດີ ແລະ ວັນນະກຳ ພ້ອມທັງຕິດຕາມ, ປັບປຸງ, ກວດແກ້ບົດວັນນະຄະດີ ແລະ ວັນນະກຳ;
17. ກຳນົດມາດຕະຖານ, ລະບຽບການ ໃນການສ້າງຕັ້ງ, ການຄຸ້ມຄອງ, ການບໍລິການຂອງຫໍສະໝຸດ, ຫ້ອງສະໝຸດ, ຫ້ອງອ່ານໜັງສືລະດັບຊາດ, ລະດັບຂະແໜງການ ແລະ ລະດັບທ້ອງຖິ່ນ;
18. ຄຸ້ມຄອງ ສົ່ງເສີມການຜະລິດຮູບເງົາເລື່ອງ, ຮູບເງົາເອກະສານ ທີ່ສ່ອງແສງເຖິງເຫດການສຳຄັນທາງດ້ານການເມືອງ, ເສດຖະກິດ-ສັງຄົມ-ວັດທະນະທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສຳເນົາໄວ້ເປັນຄັງສາງຂອງຊາດ;
19. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານວິຈິດສິນ ແລະ ສິລະປະຫັດຖະກຳ ທັງອາຊີບແລະມວນຊົນ ພ້ອມທັງກຳນົດການສ້າງຕັ້ງອະນຸສາວະລີທີ່ລະນຶກ, ການປະດັບປະດາ, ວາງສະແດງລະດັບຊາດ ແລະ ລະດັບສາກົນ.

ຄ. ດ້ານທ່ອງທ່ຽວ.

1. ຜັນຂະຫຍາຍ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດການທ່ອງທ່ຽວ ເພື່ອຫັນເປັນແຜນການ, ແຜນງານ, ໂຄງການລະອຽດ ໃນການພັດທະນາ, ໂຄສະນາ-ສົ່ງເສີມ ແລະ ຄຸ້ມຄອງທຸລະກິດການທ່ອງທ່ຽວ;
2. ໂຄສະນາ, ສົ່ງເສີມ ແລະ ພັດທະນາການທ່ອງທ່ຽວໃຫ້ຍືນຍົງ ແລະ ເຂັ້ມແຂງ. ໂຄສະນາແຫຼ່ງທ່ອງທ່ຽວ, ທຸລະກິດທ່ອງທ່ຽວ, ສົ່ງເສີມການທ່ອງທ່ຽວພາຍໃນ ແລະດຶງດູດນັກທ່ອງທ່ຽວຊາວຕ່າງປະເທດ ເຂົ້າມາທ່ອງທ່ຽວປະເທດລາວ ພ້ອມທັງປູກຈິດສຳນຶກກ່ຽວກັບຄວາມຮູ້ພື້ນຖານທີ່ດີຂອງຄົນລາວ ແລະ ຂອງຊາດລາວ;
3. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອກຳນົດການວາງແຜນພັດທະນາ ແລະ ຈັດສັນ, ບູລະນະແຫລ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃນຂອບເຂດທົ່ວປະເທດ;
4. ຄົ້ນຄວ້າປະກອບຄຳເຫັນ ທາງດ້ານວິຊາການ ກ່ຽວກັບການອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ ຫລື ກ່າວເຕືອນ, ປັບໄໝ, ສັ່ງໂຈະ ແລະ ຍຸບເລີກ ການດຳເນີນທຸລະກິດທ່ອງທ່ຽວ (ຕາມການແບ່ງຂັ້ນຄຸ້ມຄອງ) ເມື່ອເຫັນວ່າມີການກະທຳຜິດຕໍ່ກົດໝາຍ ຫລື ຂັດກັບກົດໝາຍ ແລະ ລະບຽບການທ່ອງທ່ຽວ ທີ່ກຳນົດໄວ້;
5. ກຳນົດມາດຕະຖານ ແລະ ຈັດລະດັບຂັ້ນ ຫລື ປະເພດຂອງທຸລະກິດນຳທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ທີ່ໄດ້ກຳນົດໄວ້;
6. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບໂຄງການລົງທຶນຂອງຕ່າງປະເທດ ດ້ານທຸລະກິດການທ່ອງທ່ຽວ ໃຫ້ຖືກຕ້ອງຕາມນິຕິກຳຂອງການທ່ອງທ່ຽວ ທີ່ກຳນົດໄວ້;

7. ປັບປຸງບູລະນະສູນ-ຫ້ອງຂໍ້ມູນຂ່າວສານ, ເວບໄຊການທ່ອງທ່ຽວໃຫ້ທັນສະໄໝ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ແນໃສ່ເພີ່ມທະວີການໂຄສະນາ ແລະ ປຸກລະດົມຂົນຂວາຍການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ຢ່າງແຂງແຮງ ແລະ ກວ້າງຂວາງ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການອຳນວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ໃນການເດີນທາງເຂົ້າ-ອອກ, ອອກ-ເຂົ້າ ແລະ ເດີນທາງທ່ອງທ່ຽວໃນ ສປປ ລາວ;
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້, ຄຸ້ມຄອງ, ຕິດຕາມ, ກວດກາການປະຕິບັດກົດໝາຍ, ຂໍ້ກຳນົດ, ລະບຽບການຕ່າງໆຂອງບັນດາທຸລະກິດໃນຂະແໜງທ່ອງທ່ຽວໃຫ້ຖືກຕ້ອງ ແລະ ເຂັ້ມງວດ;
10. ສ້າງ, ຈັດຕັ້ງ ຫລື ເຂົ້າຮ່ວມກິດຈະກຳທ່ອງທ່ຽວຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
11. ຊີ້ນຳສະພາສົ່ງເສີມການທ່ອງທ່ຽວແຫ່ງຊາດ ເພື່ອພັດທະນາອຸດສາຫະກຳການທ່ອງທ່ຽວໃຫ້ເຂັ້ມແຂງ ແລະ ຍືນຍົງ (ຈະມີລະບຽບອອກຕ່າງຫາກ).

ມາດຕາ 4. **ຂອບເຂດສິດ**

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ດັ່ງນີ້ :

4.1 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງ ແລະພັດທະນາວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

4.2 ສະເໜີລັດຖະບານ ອອກຄຳສັ່ງໂຈະການປະຕິບັດກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳລັດ, ຂໍ້ຕົກລົງຕ່າງໆ ໃນຂອບເຂດວຽກງານຖະແຫລງຂ່າວ, ວັດທະນະທຳ ແລະທ່ອງທ່ຽວທີ່ເຫັນວ່າບໍ່ສອດຄ່ອງ ແລະ ຂັດກັບແນວທາງນະໂຍບາຍ ຂອງພັກ-ລັດ;

4.3 ແຕ່ງຕັ້ງ, ບັນຈຸສັບຊ້ອນ, ຍົກຍ້າຍ, ເລື່ອນຊັ້ນ-ເລື່ອນຂັ້ນເງິນເດືອນ, ປະຕິບັດນະໂຍບາຍຍ້ອງຍໍສັນລະເສີນ ແລະ ປະຕິບັດວິໄນຕໍ່ພະນັກງານລັດຖະກອນ ແລະ ຕໍ່ການຈັດຕັ້ງ, ບຸກຄົນ ທັງພາກລັດ ແລະ ເອກະຊົນ ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາຂະແໜງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

4.4 ເຂົ້າຮ່ວມປະກອບຄຳເຫັນຕໍ່ກອງປະຊຸມຂອງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆທີ່ພົວພັນເຖິງຄວາມຮັບຜິດຊອບຂອງຂະແໜງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

4.5 ຮຽກປະຊຸມສະຫລຸບຖອດຖອນບົດຮຽນ, ກອງປະຊຸມສຳມະນາວິທະຍາສາດ-ວິຊາການດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນລະດັບສູນກາງ ແລະ ທ້ອງຖິ່ນ;

4.6 ພົວພັນ, ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງສາກົນຕ່າງໆ ແລະ ທ້ອງຖິ່ນ ເພື່ອເກັບກຳສະພາບ, ປຶກສາຫາລື ແລະ ປະກອບຄຳເຫັນຕໍ່ການປະຕິບັດວຽກງານ ໃນຂົງເຂດຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

4.7 ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກ ແລະ ເອກະສານຕ່າງໆ ກ່ຽວກັບວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ຕາມການເຫັນດີຂອງນາຍົກລັດຖະມົນຕີ;

4.8 ຂຶ້ນແຜນງົບປະມານ, ຄຸ້ມຄອງ ແລະ ນຳໃຊ້ພາຫະນະ, ຊັບສິນ-ຊັບສົມບັດຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ໃຫ້ມີປະສິດທິຜົນ;

4.9 ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

ກ. ຂັ້ນກະຊວງ

- ກົງຈັກການຈັດຕັ້ງທີ່ເຮັດບົດບາດຊ່ວຍລັດຖະມົນຕີ ຄຸ້ມຄອງບໍລິຫານລັດ ປະກອບມີ :

1. ຫ້ອງການກະຊວງ;
2. ກົມຈັດຕັ້ງ-ພະນັກງານ;
3. ກົມກວດກາ;
4. ກົມແຜນການ-ການເງິນ;
5. ກົມຮ່ວມມືສາກົນ;
6. ກົມສື່ມວນຊົນ;
7. ກົມສິລະປະ-ການສະແດງ;
8. ກົມວັດທະນະທຳມະຫາຊົນ;
9. ກົມພິມຈຳໜ່າຍ;
10. ກົມມໍລະດົກ;
11. ກົມຮູບເງົາ;
12. ກົມວິຈິດສິນ;
13. ກົມພັດທະນາການທ່ອງທ່ຽວ;
14. ກົມໂຄສະນາການທ່ອງທ່ຽວ;
15. ກົມຄຸ້ມຄອງການທ່ອງທ່ຽວ.

- ການຈັດຕັ້ງດ້ານວິຊາການ ຂຶ້ນກັບກະຊວງ ປະກອບມີ:

1. ວິທະຍຸກະຈາຍສຽງແຫ່ງຊາດລາວ;
2. ໂທລະພາບແຫ່ງຊາດລາວ;
3. ສຳນັກຂ່າວສານປະເທດລາວ;
4. ໜັງສືພິມປະຊາຊົນ;

5. ໜັງສືພິມພາສາຕ່າງປະເທດ;
6. ສະຖາບັນສື່ມວນຊົນ ແລະ ວັດທະນະທຳ;
7. ສະຖາບັນວິຈັດສິນແຫ່ງຊາດ.

ບັນດາການຈັດຕັ້ງເຫລົ່ານີ້ ຜູ້ເປັນຫົວໜ້າ ມີຖານະທຽບເທົ່າຫົວໜ້າກົມ.

- ການຈັດຕັ້ງດ້ານວິຊາການ ຂຶ້ນກັບກົມ ປະກອບມີ:

1. ກອງສິລະປະກອນແຫ່ງຊາດ;
2. ກອງກາຍຍະສິນແຫ່ງຊາດ;
3. ກອງລະຄອນລຳແຫ່ງຊາດ;
4. ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ;
5. ຫໍສະໝຸດແຫ່ງຊາດ;
6. ໂຮງຮຽນສິລະປະແຫ່ງຊາດ;
7. ຫໍພິພິທະພັນແຫ່ງຊາດ;
8. ກອງລະຄອນຕຸກກະຕາແຫ່ງຊາດ;
9. ກອງລະຄອນເວົ້າແຫ່ງຊາດ;
10. ວາລະສານວັນນະສິນ;
11. ສູນຝຶກອົບຮົມການທ່ອງທ່ຽວ;
12. ຫໍວັດທະນະທຳແຫ່ງຊາດ;
13. ສູນວັດທະນະທຳເດັກ;
14. ກອງບູຮານວິທະຍາ;
15. ຫ້ອງການມໍລະດົກໂລກຫລວງພະບາງ;
16. ຫ້ອງການມໍລະດົກໂລກວັດພູຈຳປາສັກ.

ບັນດາການຈັດຕັ້ງເຫລົ່ານີ້ ຜູ້ເປັນຫົວໜ້າ ມີຖານະທຽບເທົ່າ ຮອງຫົວໜ້າກົມ.

ຂ. ກົງຈັກຂັ້ນທ້ອງຖິ່ນ:

1. ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະຈຳແຂວງ, ນະຄອນຫລວງ.
2. ຫ້ອງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະຈຳເມືອງ, ເທດສະບານ.

### ມາດຕາ 6. ໂຄງປະກອບບຸກຄະລາກອນ:

6.1 ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບດ້ວຍ:

– ລັດຖະມົນຕີວ່າການ ເປັນສະມາຊິກລັດຖະບານ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະຮັບຮອງຈາກສະພາແຫ່ງຊາດ; ລັດຖະມົນຕີວ່າການມີຄວາມຮັບຜິດຊອບຕໍ່ລັດຖະບານ ໃນການປະຕິບັດ

ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2, 3 ແລະ 4 ຂອງດຳລັດສະບັບນີ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

ໃນກໍລະນີຕິດຂັດ ຫລື ບໍ່ຢູ່ ລັດຖະມົນຕີວ່າການຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ລັດຖະມົນຕີຊ່ວຍວ່າການ ທ່ານໃດທ່ານໜຶ່ງຮັກສາການແທນ ແລະ ມີສິດເຊັນເອກະສານທາງການແທນ;

- ລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ. ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການໃນການຊີ້ນຳ-ນຳພາ, ອຳນວຍຄວບຄຸມວຽກງານລວມຂອງກະຊວງ, ລົງເລິກຮັບຜິດຊອບກຸ່ມວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີວ່າການ. ຮັກສາການແທນລັດຖະມົນຕີວ່າການໃນເວລາລັດຖະມົນຕີບໍ່ຢູ່ ໂດຍມີການມອບສິດຢ່າງເປັນລາຍລັກອັກສອນ. ໃນເວລາລັດຖະມົນຕີວ່າການກັບຄືນມາ ຜູ້ຮັກສາການແທນຕ້ອງລາຍງານວຽກທີ່ຕົນໄດ້ແກ້ໄຂ ໃຫ້ລັດຖະມົນຕີວ່າການຊາບ;
- ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການວິຊາການ, ຫົວໜ້າສະຖາບັນຫໍສະໝຸດແຫ່ງຊາດ ... ເຊິ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ບົນພື້ນຖານການນຳສະເໜີຂອງລັດຖະມົນຕີວ່າການກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ການສະເໜີຂອງຄະນະຈັດຕັ້ງສູນກາງພັກ;
- ມີຮອງຫົວໜ້າກົມ ແລະ ທຽບເທົ່າ ເຊິ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບົນພື້ນຖານການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ແລະ ໄດ້ຮັບການເຫັນດີຈາກຄະນະຈັດຕັ້ງສູນກາງພັກ;
- ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ ເຊິ່ງໄດ້ຮັບການແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍລັດຖະມົນຕີວ່າການກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບົນພື້ນຖານການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ແລະ ໄດ້ຮັບການເຫັນດີຈາກຄະນະພັກກະຊວງ;
- ມີພະນັກງານວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ ເພື່ອປະກອບເຂົ້າຕຳແໜ່ງງານຕ່າງໆຕາມຄວາມເໝາະສົມ ເຊິ່ງໄດ້ຮັບບັນຈຸ, ສັບຊ້ອນ ຫລື ຍົກຍ້າຍຈາກລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

6.2 **ຂັ້ນທ້ອງຖິ່ນ**: ມີຫົວໜ້າ, ຮອງຫົວໜ້າພະແນກຖະແຫລງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຂັ້ນແຂວງ ແລະ ຫົວໜ້າຫ້ອງການຖະແຫລງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຂັ້ນເມືອງ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບົນພື້ນຖານການເຫັນດີເປັນເອກະພາບກັບຄະນະພັກ-ອົງການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ. ນອກນັ້ນຍັງມີບັນດາລັດຖະກອນວິຊາການ ທີ່ສັງກັດຢູ່ໃນໂຄງປະກອບກົງຈັກ ຂອງພະແນກຖະແຫລງຂ່າວ, ວັດທະນະທຳ

ແລະ ທ່ອງທ່ຽວຂັ້ນແຂວງ ແລະ ຫ້ອງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຂັ້ນເມືອງ ຕາມຕຳແໜ່ງງານທີ່ໄດ້ກຳນົດໄວ້.

## ໝວດທີ IV
## ຫລັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7. ຫລັກການ**

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຄື່ອນໄຫວ ແລະດຳເນີນງານຕາມຫລັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ແລະ ປະຕິບັດລະບອບຫົວໜ້າດຽວ; ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ພັດທະນາຂະແໜງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ພ້ອມທັງມອບສິດອຳນາດຢ່າງຈະແຈ້ງໃນໝູ່ຄະນະ ໃນການແກ້ໄຂບັນຫາຕ່າງໆ.

**ມາດຕາ 8. ແບບແຜນວິທີເຮັດວຽກ**

8.1 ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນກັບອົງການທີ່ກ່ຽວຂ້ອງ;

8.2 ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫລຸບຖອດຖອນບົດຮຽນ, ຕີລາຄາຜົນເສຍ, ຜົນໄດ້ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;

8.3 ການເຄື່ອນໄຫວຂອງກະຊວງ ຖືເອົາແນວທາງຍຸດທະສາດ, ແຜນນະໂຍບາຍຂອງສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເປັນທິດທາງ;

8.4 ປະຕິບັດລະບອບປະຊຸມ ແລະ ສ່ອງແສງ ປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີຂອງຄະນະນຳກະຊວງ, ໂດຍມີການເຂົ້າຮ່ວມຂອງຄະນະຫ້ອງການ, ຄະນະກົມ, ຄະນະສະຖາບັນ,ຄະນະກອງ ແລະ ຄະນະສູນ, ເພື່ອສະຫລຸບ-ສັງລວມຕີລາຄາແລ້ວລາຍງານໃຫ້ລັດຖະບານ, ນາຍົກລັດຖະມົນຕີ ຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ຕາປະທັບ**

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີງົບປະມານ ແລະຕາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ກອງ ແລະ ການຈັດຕັ້ງອື່ນໆ ທີ່ຂຶ້ນກັບກະຊວງ ຕາມທີ່ລະບຸໄວ້ໃນມາດຕາ 5 ຂອງ ດຳລັດສະບັບນີ້.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ຫ້ອງວ່າການລັດຖະບານ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ບັນດາກະຊວງ-ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງ ແລະ ບັນດາການຈັດຕັ້ງທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 381/ນຍ, ລົງວັນທີ 02 ພະຈິກ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແລະ ດຳລັດສະບັບເລກທີ 91/ນຍ, ລົງວັນທີ 30 ມິຖຸນາ 2004 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການທ່ອງທ່ຽວແຫ່ງຊາດ.

**ນາຍົກລັດຖະມົນຕີ**

**ທອງສິງ ທຳມະວົງ**